ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 06 /ຈຂ.ອປ

ວັນທີ 12 ມິຖຸນາ 2020

# ຄໍາສັ່ງ

## ກ່ຽວກັບການຄຸ້ມຄອງຈັດເກັບ ອາກອນລາຍໄດ້ ຈາກການຊື້-ຂາຍ, ການໂອນສິດນໍາໃຊ້ ທີ່ດິນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ

ເຖິງ : ທ່ານຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ, ທ່ານເຈົ້າເມືອງ 05 ຕົວເມືອງ, ຫົວໜ້າພະແນກການ, ກົມກອງ ແລະ ອົງການທຽບເທົ່າ, ຕະຫລອດຮອດ ບັນດາຫົວໜ່ວຍທຸລະກິດ ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນບັນດາເຜົ່າ ທີ່ມີລາຍໄດ້ ຈາກການຊື້-ຂາຍ, ການໂອນສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ ໃນຂອບເຂດທົ່ວແຂວງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ 4 ມາດຕາ 20(ປັບປຸງ) ວ່າດ້ວຍສິດ ແລະ ໜ້າທີ່ ເຈົ້າແຂວງ,ເຈົ້າຄອງນະຄອນ;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ,ລົງວັນທີ 21 ຕຸລາ 2003;
- ອີງຕາມ ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ,ລົງວັນທີ 18 ມິຖຸນາ 2019.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ພາກທີ III, ໝວດທີ 1, ມາດຕາ 34 ແລະ 44 ກ່ຽວກັບການຄຸ້ມຄອງເກັບອາກອນລາຍໄດ້ ຈາກການຊື້-ຂາຍ, ການໂອນສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ ໄດ້ຖືກຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ເວົ້າລວມ,ເວົ້າສະເພາະແມ່ນແຂວງອັດຕະປືພວກເຮົາ; ທັງນີ້ກໍ່ເພື່ອແນະ ນໍາຂັ້ນຕອນ, ວິທີການຈັດຕັ້ງປະຕິບັດ ຂອງ ບັນດາຂະແໜງການທີ່ກ່ຽວຂ້ອງ ໃຫ້ມີຄວາມລະອຽດ, ຮັດກຸມ ແລະ ມີຄວາມເອກະພາບທາງດ້ານວິຊາການ ຮັບປະກັນການຈັດເກັບລາຍຮັບດັ່ງກ່າວໃຫ້ມີປະສິດທິຜົນສູງ.

## ເຈົ້າແຂວງ ອອກຄໍາສັ່ງ :

1. ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ຕະຫລອດຮອດປະຊາຊົນບັນດາເຜົ່າ ຫລື ຜູ້ໄດ້ຮັບສິດນໍາໃຊ້ທີ່ດິນ ທີ່ມີລາຍໄດ້ຈາກການຊື້-ຂາຍ, ການໂອນສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ ໃນຂອບເຂດທົ່ວແຂວງ ຕ້ອງໄດ້ແຈ້ງ-ມອບອາກອນລາຍໄດ້ຈາກກິດຈະການດັ່ງກ່າວ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ. ນອກຈາກຈະໄດ້ຮັບການຍົກເວັ້ນ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 35, ຂໍ້ 17 ແລະ ຂໍ້ 18 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

2. ວິທີ ແລະ ຂັ້ນຕອນການຈັດເກັບ :

2.1 ທຸກໆການຊື້-ຂາຍ, ການໂອນສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຜູ້ມີລາຍໄດ້ ຕ້ອງປະກອບເອກະສານຢັ້ງຢືນການຊື້-ຂາຍ ຫລື ການໂອນສິດ ( ຕາມແບບຟອມຂອງຂະແໜງສ່ວຍສາອາກອນໄດ້ກຳນົດເທົ່ານັ້ນ ) ແລະ ດຳເນີນການແຈ້ງ-ມອບອາກອນລາຍໄດ້ຈາກການຊື້-ຂາຍ ຫລື ການໂອນສິດດັ່ງກ່າວ ( ຕາມທີ່ໄດ້ລະບຸໄວ້ ຢູ່ໃນ ຂໍ້ 1 ຂອງຄຳສັ່ງສະບັບນີ້ ) ຢູ່ຂະແໜງສ່ວຍສາອາກອນ ບ່ອນທີ່ດິນຕັ້ງຢູ່ ແລະ ແຍກການປະຕິບັດ ດັ່ງນີ້:

- **ປະເພດດິນປຸກສ້າງ ແລະ ປະເພດດິນກະສິກຳ ທີ່ມີເອກະສານຖືກຕ້ອງ:** ກ່ອນການໂອນສິດຕ້ອງໄດ້ດຳເນີນການຄິດໄລ່ ແລະມອບອາກອນລາຍໄດ້ ຕາມລະບຽບ, ກົດໝາຍກຳນົດ;
- **ດິນສັບຊ່ຽວໃໝ່ແຕ່ລະປະເພດ:** ກ່ອນການໂອນສິດ ຕ້ອງໄດ້ຮັບການກວດກາຢັ້ງຢືນ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຖືກຕ້ອງເສຍກ່ອນ ຈຶ່ງດຳເນີນການຄິດໄລ່ອາກອນລາຍໄດ້ ຕາມລະບຽບ, ກົດໝາຍກຳນົດ.

2.2 ກ່ອນການປະກອບເອກະສານ ຫລື ເຊັນອະນຸມັດເອກະສານຢັ້ງຢືນການຊື້-ຂາຍ, ການໂອນສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ດຳເນີນການກວດກາ, ຄິດໄລ່ມູນຄ່າຕອນດິນຕາມລາຄາກາງທີ່ໄດ້ກຳນົດ, ແລ້ວເຮັດສະໂນດນຳສົ່ງໃຫ້ສ່ວຍສາອາກອນປະຈຳເມືອງ ບ່ອນທີ່ດິນຕັ້ງຢູ່ ຫລື ສ່ວຍສາອາກອນປະຈຳແຂວງ ເປັນຜູ້ຄິດໄລ່ອາກອນທີ່ຕ້ອງມອບ ແລະ ປະກອບເອກະສານສັ່ງມອບເງິນເຂົ້າງົບປະມານ ໃຫ້ຖືກຕ້ອງຕາມລະບຽບການ;

3. **ພື້ນຖານຄິດໄລ່ ແລະ ອັດຕາ ອາກອນລາຍໄດ້:**

3.1 ພື້ນຖານການຄິດໄລ່: ແມ່ນເອົາມູນຄ່າຊື້-ຂາຍ ທີ່ດິນທັງໝົດທີ່ໄດ້ຮັບ, ແຕ່ບໍ່ໃຫ້ຫລຸດລາຄາກາງ ທີ່ໄດ້ຮັບຮອງ ຈາກອຳນາດການປົກຄອງແຂວງ ໃນແຕ່ລະໄລຍະ ຄູນກັບ ( x ) ອັດຕາອາກອນລາຍໄດ້.

3.2 ອັດຕາອາກອນລາຍໄດ້: ແມ່ນໃຫ້ປະຕິບັດຕາມ ມາດຕາ 39, ຂໍ້ 2 ແລະ ຂໍ້ 3 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ດັ່ງນີ້:

3.2.1 ອັດຕາໜຶ່ງສ່ວນຮ້ອຍ (1%) ຂອງລາຍໄດ້ທັງໝົດ ສຳລັບການຊື້-ຂາຍ, ການໂອນສິດນຳໃຊ້ປະເພດ ທີ່ດິນກະສິກຳ ເພື່ອເປົ້າໝາຍເຮັດການຜະລິດກະສິກຳ;

3.2.2 ອັດຕາສອງສ່ວນຮ້ອຍ (2%) ຂອງລາຍໄດ້ທັງໝົດ ສຳລັບການຊື້-ຂາຍ, ການໂອນສິດນຳໃຊ້ທີ່ດິນ (ນອກຈາກຂໍ້ 3.2.1), ເຮືອນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ;

4. ການປະກອບເອກະສານໂອນສິດນຳໃຊ້ທີ່ດິນ ແມ່ນມອບໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ດຳເນີນເທົ່ານັ້ນ. ສຳລັບການໂອນສິດ ລະຫວ່າງ ຄູ່ກໍລະນີ ແລະ ໄດ້ຮັບການຢັ້ງຢືນພຽງແຕ່ຂັ້ນອຳນາດການປົກຄອງບ້ານ ແມ່ນຖືວ່າບໍ່ຖືກຕ້ອງ;

5. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕະຫລອດຮອດ ພໍ່ແມ່ປະຊາຊົນບັນດາເຜົ່າ ດຳເນີນການໂອນສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ຫລື ທີ່ດິນພ້ອມສິ່ງປຸກສ້າງ ໂດຍບໍ່ໄດ້ແຈ້ງ-ມອບອາກອນລາຍໄດ້ຈາກການໂອນສິດດັ່ງກ່າວ ຢ່າງເດັດຂາດ;

- ກໍລະນີກວດກາພົບເຫັນ ມອບໃຫ້ຂະແໜງສ່ວຍສາອາກອນ ປະຕິບັດຕາມມາດຕະການ ທີ່ໄດ້ກຳນົດໄວ້ ຢູ່ໃນລະບຽບ, ກົດໝາຍ ຕາມແຕ່ລະກໍລະນີ ຢ່າງເຂັ້ມງວດ;

6. ໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຮັດໜ້າທີ່ກວດກາເອກະສານຢັ້ງຢືນການມອບພັນທະອາກອນເຂົ້າງົບປະມານຈາກການໂອນສິດດັ່ງກ່າວໃຫ້ຄົບຖ້ວນ, ແລ້ວຈຶ່ງອະນຸມັດເອກະສານການໂອນ

ສິດນຳໃຊ້ທີ່ດິນຕາມລະບຽບການ ແລະ ເຮັດໜ້າທີ່ສະໜອງຂໍ້ມູນ ໃນການປະກອບເອກະສານ ການໂອນສິດນຳໃຊ້ທີ່ດິນ ໃຫ້ຂະແໜງສ່ວຍສາອາກອນ ເປັນແຕ່ລະໄລຍະ;

7. ມອບໃຫ້ບັນດາເຈົ້າເມືອງ 05 ຕົວເມືອງ ຊີ້ນຳບັນດາຂະແໜງການກ່ຽວຂ້ອງຂັ້ນເມືອງ ປະສານສົມທົບ ກັບອຳນາດການປົກຄອງຂັ້ນບ້ານ, ນາຍບ້ານ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຮ່ວມກັນເຮັດໜ້າທີ່ໂຄສະນາ, ເຜີຍແຜ່ວຽກງານດັ່ງກ່າວໃຫ້ແທດເຖິງທຸກເປົ້າໝາຍ;

8. ມອບໃຫ້ພະແນກການເງິນແຂວງ, ສ່ວຍສາອາກອນປະຈຳແຂວງ ເປັນເຈົ້າການປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເຮັດໜ້າທີ່ໂຄສະນາ, ເຜີຍແຜ່ເນື້ອໃນຈິດໃຈດັ່ງກ່າວໃຫ້ບັນດາພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ, ຕະຫລອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຊາບຢ່າງທົ່ວເຖິງ; ພ້ອມກັນນັ້ນ ກໍ່ເຮັດໜ້າທີ່ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ຕາມລະບຽບ, ກົດໝາຍໄດ້ກຳນົດໄວ້ ແລະ ລາຍງານ ໃຫ້ເຈົ້າແຂວງຊາບ ເປັນແຕ່ລະໄລຍະ;

9. ຄຳສັ່ງສະບັບນີ້ນຳໃຊ້ປ່ຽນແທນ ຄຳສັ່ງແນະນຳ ສະບັບເລກທີ 20/ຈຂ.ອປ, ລົງວັນທີ 09 ກັນຍາ 2019 ແລະ ມີຜົນບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ,ຈິ່ງອອກຄຳສັ່ງສະບັບນີ້ ມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ເຈົ້າແຂວງ**

ເລັດ ໄຊຍະພອນ

ບ່ອນສົ່ງ :

1. ຫ້ອງວ່າການແຂວງ 01 ສະບັບ;
2. ທ່ານເຈົ້າເມືອງ ເມືອງລະ 01 ສະບັບ;
3. ພະແນກ ຊັບພະຍາກອນທາມະຊາດ ແລະສິ່ງແວດລ້ອມແຂວງ 01 ສະບັບ;
4. ພະແນກການເງິນແຂວງ 01 ສະບັບ;
5. ສ່ວຍສາອາກອນປະຈຳແຂວງ 01 ສະບັບ;
6. ຂະແໜງການກ່ຽວຂ້ອງຂັ້ນເມືອງ ແລະ ບ້ານ ບ່ອນລະ 01 ສະບັບ;
7. ເກັບຮັກສາໄວ້ 01 ສະບັບ.